**<u>ເອກະສານຕ່າງໆສຳຣັບການສຶກສາ</u>**

ແວບໄຊພາກນີ້ແມ່ນໃຫ້ຂ່າວຂໍ້ມູນໃນຄວາມຣຸນແຮງຄອບຄົວທີ່ອາດຊ່ອຍທ່ານ, ທີ່ທ່ານສາມາດ ໃຊ້ເພື່ອຊ່ອຍຄົນອື່ນໆ.

ທ່ານສາມາດຊອກຄົ້ນໄດ້ວ່າຄວາມຣຸນແຮງຄອບຄົວນັ້ນແມ່ນຫຍັງ, ຄວາມປະພຶດຫລວງຫລາຍໃນວົງກວ້າງທີ່ເປັນສ່ວນປະກອບເປັນຄວາມ ຣຸນແຮງໃນຄອບຄົວ, ບັນຫາການເປັນຄົນເຂົ້າເມືອງມີຜົນສະທ້ອນຕໍ່ທ່ານແນວໃດ, ແລະກົດໝາຍເຣື່ອງການ ລັກລອບເອົາຄົນເຂົ້າເມືອງ.

**ຄວາມຣຸນແຮງໃນຄອບຄົວແມ່ນຫຍັງ?**

ຖ້າທ່ານຖືກຂົ່ມຂືນທາຣຸນທາງດ້ານຮ່າງກາຍ, ທາງເພດ, ຫລືທາງອາຣົມໂດຍ ຄົນໃດໜຶ່ງໃນຄອບຄົວຂອງທ່ານ, ຜູ້ໃດຜູ້ໜຶ່ງທີ່ທ່ານມີລູກຮ່ວມ, ຫລືຜູ້ໃດຜູ້ໜຶ່ງທີ່ທ່ານອອກທ່ຽວຮ່ວມແບບຄູ່ບ່າວຄູ່ສາວ, ນັ້ນຖືວ່າແມ່ນຄວາມຣຸນແຮງໃນຄອບຄົວ.

ທ່ານມີສິດທິຕໍ່ການຖືກຄຸ້ມກັນຈາກຄົນທີ່ສ້າງຄວາມເຈັບປວດແກ່ທ່ານ.

ຄວາມຣຸນແຮງໃນຄອບຄົວແມ່ນການກະທຳທີ່ຄົນໃດຄົນໜຶ່ງທີ່ພະຍາຍາມບັງຄັບຄວບຄຸມຜູ້ອື່ນໂດຍໃຊ້ການກະທຳທີ່ເຮັດໃຫ້ ດູໝິ່ນເຮົາ, ການຂູ່ເຂັນຕ່າງໆ, ການຂົ່ມຂືນທາງເພດ, ການຕິດຕາມເຮົາໄປທຸກແຫ່ງຫົນ, ການຄວບຄຸມເງິນຫລືບັນຊີທະນາຄານ, ແລະຄວາມປະພຶດຕ່າງໆທີ່ຄ້າຍຄືກັນນີ້.

ຄວາມຣຸນແຮງໃນຄອບຄົວແມ່ນເປັນອັນຕຣາຍ, ແລະມັກຈະຮ້າຍແຮງລົງຖ້າປາສະຈາກການຊ່ອຍເຫລືອໃດໜຶ່ງ.

ບັນຊີຢູ່ລຸ່ມນີ້ແມ່ນຕົວຢ່າງຂອງຄວາມປະພຶດຕ່າງໆພ້ອມທັງສະແດງໃຫ້ເຫັນເຖິງຄວາມທາຣຸນຂອງຄົນທີ່ໃກ້ສິດໃນຄອບຄົວນັ້ນຕໍ່ຄູ່ຊີວິດແລະ ວິວັດທະນາການໄປເຖິງຂັ້ນອັນຕຣາຍຕ່າງໆໄດ້ແນວໃດ.

## <u>ກະແສຄວາມຣຸນແຮງໃນຄອບຄົວ</u>

| | |
|---|---|
| **<u>ທາງດ້ານອາຣົມ:</u>**<br>• ການສົ່ງສຽງດັງໃສ່ຊໍ້າແລ້ວຊໍ້າຢ່າແລະຢຽດຫຍາມຕ່າງໆ<br>• ຕົວະກ່ຽວກັບຖານະເຣື່ອງການເຂົ້າເມືອງຂອງທ່ານ.<br>• ການບອກຄອບຄົວຂອງທ່ານໃນເຣື່ອງຂອງທ່ານທີ່ບໍ່ຖືກຕ້ອງ.<br>• ການບອກທ່ານວ່າທ່ານຖິ້ມວັດທະນະທຳຂອງທ່າໝແລະກາຍ ເປັນ "ຄົນຂາວ" ຫລື "ຄົນອະເມຣິກັນ."<br>• ບໍ່ຫົວຊາຫລືຖືເບົາຕໍ່ຄວາມຮູ້ສຶກຕ່າງໆຂອງທ່ານ<br>• ກັກຕຸນຄວາມເຫັນພ້ອມຫລືຄວາມອູ້ມຊູທາງອາຣົມໃນເຊີງເປັນ ການລົງໂທດ<br>• ການເຮັດໃຫ້ຕໍ່າຕ້ອຍຕໍ່ຝຸງຊົນຫລືສ່ວນຕົວ<br>• ການຕຳໜິແລະກ່າວໂທດ<br>• ສັ່ງການເອົາຄວາມເອົາໃຈໃສ່ທັງໝົດຂອງທ່ານ<br>• ຂົ່ມຂູ່ຕໍ່ເດັກທັງຫລາຍຫລືການແຕ່ງງານ<br>• ລຸດຕຳແໜ່ງຄືກັບເປັນຄົນພຽງຮ່ວມເພດ/ຜູ້ຮ່ວມຮັກ/ຜູ້ມີສ່ວນຮ່ວມ<br>• ໃຊ້ເຣື່ອງຄວາມເຊື່ອເຣື່ອງເພດແລະຖານະບົດບາດ<br>• ເວົ້າຢຽດຫຍາມວັດທະນະທັມແລະສາສນາຂອງທ່ານ<br>• ຄວບຄຸມການຕັດສິນທີ່ສຳຄັນທັງຫລາຍ<br>• ຫວງການຄວບຄຸມຢູ່ສະເໝີ<br>• ບອກທ່ານວ່າທ່ານເປັນປະສາດຕົກໃຈ, ສະທ້ານຢ້ານກົວ, ເປັນໂຣກຈິດ, ຄາດຕະກອນ | **<u>ທາງດ້ານເພດ:</u>**<br>• ເວົ້າຕລົກທາງເພດຫລືມີຄວາມເຫັນແບບ ອະນາຈານທາງເພດ<br>• ຄວາມອິດສາ (ເຊັ່ນຕົວຢ່າງ, ລະແວງວ່າທ່ານຮ່ວມເພດກັບຄົນອື່ນ<br>• ການແຕະຕ້ອງທີ່ບໍ່ພໍໃຈ<br>• ວິພາກວິຈານຄວາມເປັນໄປດ້ານເພດຂອງທ່ານ<br>• ດ່າດ້ວຍຄຳສະແດງລັກສນະທາງເພດ<br>• ບັງຄັບໃຫ້ທ່ານເບິ່ງ/ໃຊ້ການຂູ່ເຂັນເຮັດຄືຮູບໂປ້<br>• ບັງຄັບຫລືຮ່ວມເພດທີ່ບໍ່ສະບາຍໃຈ (ໃຊ້ຄວາມຂູ່)<br>• ຂູ່ຫລືວ່າມີການຮ່ວມເພດທີ່ບໍ່ສະບາຍໃຈ<br>• ບັງຄັບຫລືສັ່ງການໆຮ່ວມເພດພາຍຫລັງການຖືພາ ຫລືການຜ່າຕັດ<br>• ຂົ່ມຂືນ<br>• ການຍັບຢັ້ງທາງເພດແລະຄວາມຮັກ<br><br>**<u>ການກົດຂີ່ທາງດ້ານການເງິນ:</u>**<br><br>• ບັງຄັບໃຫ້ທ່ານເຮັດວຽກ"ຢ່າງຜິດກົດໝາຍ" ເມື່ອທ່ານບໍ່ມີໃບອະນຸ<br>• ຂູ່ວ່າຈະຣາຍງານທ່ານໄປຫາ INS ຖ້າທ່ານ"ເຮັດວຽກແບບກ້ອງໂ<br>• ບໍ່ໃຫ້ທ່ານໄດ້ຝຶກງານຫລືເຂົ້າໂຮງຮຽນ<br>• ກອບໂກຍເງິນໂດຍວິທີການສຳຣັບຄອບຄົວຂອງທ່ານທາງບ້ານ |

| | |
|---|---|
| **ທາງຮ່າງກາຍ**<br>• ປະຕິເສດຕອບສະໜອງຄວາມຕ້ອງການຈຳເປັນຕ່າງໆ ທາງຮ່າງກາຍພາຍໃນຄອບຄົວກັບຄົນເພິ່ງພາ<br>• ຊຸກຍູ້ຫລືທົ່ງແທງ<br>• ເຮັດໃຫ້ແຄ້ນຫລືຕົບຕີ<br>• ເຮັດໃຫ້ຕົກສະເງີ້, ການຕົບຕ່ອຍ, ການກັດ ຫລືການຫຍິກຫຍຸມ<br>• ການຈັບສັ່ນຫລືການເຮັດໃຫ້ຊ້ຳເປົ່າ<br>• ການຕີ, ການຊັດ, ການເຕະ<br>• ການໂຍນທ່ານໄປ<br>• ການກັກຕົວທ່ານໃນຕອນທຸບຕີຫລືຊັດ<br>• ບໍ່ໃຫ້ທ່ານໄດ້ມີອາຫານກິນ, ຢາປົວພະຍາດຕ່າງໆຫລືການນອນ<br>• ເອົາເຊືອກຜູກ, ກະດູກແຕກຫັກ, ການເຈັບປວດທາງໃນ<br>• ການໃຊ້ອາວຸດຕ່າງໆຫລືການໃຊ້ວັດຖຸໃດວັດຖຸໜຶ່ງເປັນອາວຸດຕ່າງໆ<br>• ການເຮັດໃຫ້ພິການຫລືເສັງໂສມ<br>• ການຄາດຕະກຳ (ຂ້າ)<br><br>**ການສ້າງຄວາມອຶດອັດລຳຄານໃຈ:**<br><br>• ເຊື່ອງຫລືການທຳລາຍເອກະສານສຳຄັນຕ່າງໆ (ໜັງສືຜ່ານແດນ, ບັດປະຈຳຕົວ, ບັດຊຽວ, ແລະອື່ນໆ).<br>• ການທຳລາຍຮູບພາບຕ່າງໆຂອງຄອບຄົວຂອງທ່ານ<br>• ການທຳລາຍສົມບັດຕ່າງໆທີ່ທ່ານເອົາມາແຕ່ປະເທດເດີມຂອງທ່ານ<br>• ການຂູ່ເຂັນຕໍ່ບຸກຄົນທີ່ອູ້ມຊູນາງ, ຫລືສະມາຊິກຄອບຄົວທີ່ຫ່າງກັນຫລືໝູ່ຄູ່ທັງຫລາຍ<br>• ການຂູ່ເຂັນເພື່ອເພີຍຄວາມລັບຕ່າງໆຂອງຄອບຄົວ<br>• ໃຊ້ການຂ້າໂຕຕາຍມາຂູ່ເຂັນ.<br>• ການເວົ້າເຍີ້ຍຫຍັນສັນຊາດຂອງທ່ານ, ອາຊີບ, ຫລືເພດ<br>• ການທຳລາຍຫລືທັບມ້າງສົມບັດຂອງທ່ານ<br>• ການສະແດງອວດຄວາມເຂັ້ມແຂງ<br>• ບັງຄັບໃຫ້ທ່ານເຊັນໜັງສືເປັນພາສາອັງກິດທີ່ທ່ານບໍ່ເຂົ້າໃຈໜັງສືສານ, ໃບ IRS, ບັນທຶເອກະສານຕ່າງໆ ເຣື່ອງການເປັນຄົນເຂົ້າເມືອງ) | • ບໍ່ໃຫ້ທ່ານຮູ້ຫລືກັນຊ່ອງທາງເຂົ້າຫາເງິນລາຍໄດ້ຂອງຄອບຄົວ.<br><br>**ການແຍກຕົວ:**<br><br>• ແຍກທ່ານຈາກໝູ່ຄູ່ຫລືຄອບຄົວທັງຫລາຍ<br>• ບໍ່ອະນຸຍາດໃຫ້ທ່ານໄດ້ຮຽນພາສາອັງກິດ<br>• ບໍ່ອະນຸຍາດໃຫ້ທ່ານໄດ້ສື່ສານເປັນພາສາຂອງທ່ານເອງ<br>• ການອ່ານໄປສະນີຂອງທ່ານ, ຫລືບໍ່ອະນຸຍາດໃຫ້ທ່ານ ໃຊ້ ໂທຣະສັບ<br>• ຕັດການຈອງຫລືທຳລາຍໜັງສືພິມແລະວາຣະສານຕ່າງໆ ໃນພາສາຂອງທ່ານ<br>• ບໍອະນຸຍາດໃຫ້ທ່ານລົມກັບຄົນອື່ນເປັນພາສາຂອງທ່ານໝູ ລືຄົນຈາກສຊຸມຊົນ, ວັດທນະທຳ, ຫລືປະເທດຂອງທ່ານ.<br>• ລົບລ້າງຣະບົບການອູ້ມຊູຕ່າງໆ<br>• ທຳທ່າແປກໜ້າຕໍ່ຄອບຄົວຫລືໝູ່ຄູ່ທັງຫລາຍຂອງທ່ານ.<br><br>**ການໃຊ້ລູກເປັນເຄື່ອງມື:**<br><br>• ຂູ່ວ່າຈະພາລູກຂອງທ່ານທັງຫລາຍນັ້ນໜີຈາກສຫະຣັດ<br>• ຂູວ່າຈະລາຍງານເດັກຂອງທ່ານຫາ INS<br>• ເອົາເງິນທີ່ທ່ານວ່າຈະສົ່ງເມືອບ້ານເພື່ອລ້ຽງດູເດັກທັງຫລາຍ ຂອງທ່ານ<br>• ຂູ່ວ່າຈະສົ່ງທ່ານຄືນພະເທດແລະຈະເອົາລູກທັງຫລາຍໃວ້ໃນ ສຫະຣັດ<br>• ການບອກທ່ານວ່າຖ້າທ່ານຊອກຫາຄວາມຊ່ອຍເຫລືອຈາກ ສານຫລືຈາກຕຳຣວດ, ຣະບົບກົດໝາຍຂອງສະຫະຣັດຈະ ເອົາສິດຄວາມຄຸ້ມຄອງເດັກທັງຫລາຍໃຫ້ແກ່ຜູ້ທີ່ທາຣຸນ |

**ຄວາມຮຸນແຮງໃນຄອບຄົວແລະການເປັນຖານະຄົນເຂົ້າເມືອງ**

ໃນບາງສະພາບການ,ມີກົດໝາຍພິເສດທີ່ຄຸ້ມກັນຄົນເຂົ້າເມືອງທັງຫລາຍຜູ້ທີ່ຖືກຄວາມຮຸນແຮງໃນຄອບຄົວຫລື ການລອບຄົນຜ່ານແດນ

<u>ແຕ່ຢ່າໄດ້ຕິດຕໍ່ຫາ USCIS ໂດຍບໍ່ທັນໄດ້ຮັບກຳແນະນຳຈາກທະນາຍຫລືຜູ້ຜູ້ຊ່ອຍເຫລືອໃນເຣື່ອງຄວາມຮຸນແຮງໃນຄອບຄົວກ່ອນ.</u>
ກົດໝາຍທີ່ຜ່ານໂດຍຣັດຖະບານອະເມຣິກັນຊຶ່ງເອີ້ນວ່າ ກົດມາຕຣາວ່າດ້ວຍການຕ້ານຄວາມຮຸນແຮງຕໍ່ຜູ້ຍິງ (Violence Against Women's Act) ຊ່ອຍການປ້ອງກັນດ້ານກົດໝາຍພິເສດໃຫ້ແກ່ທ່ານແລະການຄວບຄຸມຕື່ມ

ອະນາຄົດຂອງທ່ານ.

ມັນໄດ້ຄົ້ນຄິດສອງວິທີການຂຶ້ນສຳລັບຜູ້ຍິງທີ່ເປັນຄົນເຂົ້າເມືອງທັງຫລາຍຜູ້ຖືກທາລຸນແລະຜູ້ທີ່ໄດ້ແຕ່ງງານກັບຄົນທີ່ເປັນ

ສັນຊາດອະເມຣິກັນທັງຫລາຍຫລືຄົນທີ່ຢູ່ຖາວອນຖືກຕາມກົດໝາຍ:

I-360 – ການຂໍໃຫ້ຕົນເອງ:
ແທນທີ່ຈະເພິ່ງພາແຕ່ຜົວຂອງທ່ານໃນການຂໍເອົາຖານະການຢູ່ໃນປະເທດສຫະລັດກັບຫ້ອງການບໍລິການຄວາມເປັນ

ສັນຊາດແລະການເປັນຄົນເຂົ້າເມືອງຂອງສຫະລັດ (United States Citizenship and Imigration Service)
ແຕ່ກ່ອນເອີ້ນວ່າຫ້ອງການການບໍລິການຄົນເຂົ້າເມືອງແລະການປ່ຽນແປງສັນຊາດ [Immigration and Naturalization Service)]
ທ່ານສາມາດຂໍໃຫ້ຕົນເອງແລະເດັກທັງຫລາຍຂອງທ່ານໄດ້. ຜົວຂອງທ່ານບໍ່ໄດ້ມີບົດບາດໃດໃນຣະບົບການແລະບໍ່ຈຳເປັນຕ້ອງ

ຮູ້ວ່າທ່ານກຳລັງຂໍເອົາການເປັນຄົນອາໄສຢູ່.

I-751 – ການຍົກເລີກການຖືກຂັບໄລ່ອອກນອກປະເທດ: ນີ້ມີໃຫ້ພຽງແຕ່ວ່າຖ້າທ່ານຫາກຢູ່ໃນ,
ຫລືສາມາດຈັດສົ່ງໃຫ້ທ່ານຢູ່ໃນຣະບົບການສົ່ງກັບຄືນຕ່າງໆ. ຖ້າທ່ານໄດ້ຮັບອະນຸຍາດ, ທີ່ໄດ້ຮັບການຍົກເລີກການຍົກ ຍ້າຍຂັບໜີ,
ສານຈະຍົກເລີກການສົ່ງກັບເມືອງຂອງທ່ານແລະອະນຸມັດຄວາມອາໄສຢູ່ແກ່ທ່ານ. ເຖິງຢ່າງໃດກໍ່ຕາມ,
ຍ້ອນວ່າທ່ານຕ້ອງຢູ່ໃນຣະບົບຕ່າງໆຂອງການໄລ່ໜີກ່ອນທ່ານສາມາດຂໍເອົາໄດ້,
ໃຫ້ໝັ້ນໃຈວ່າທ່ານຕ້ອງພົບກັບທະນາຍຄວາມດ້ານການເປັນຄົນເຂົ້າເມືອງກ່ອນຣະບົບການນັ້ນກ່ອນ.

ກົດໝາຍເປັນເລື່ອງທີ່ສັບສົນ. ທ່ານບໍ່ຄວນໄປຫ້ອງການ USCIS ໂດຍປາສະຈາກການປຶກສາກັບຜູ້ເຮັດວຽກຢູ່ບ່ອນພັກຊົ່ວຄາວນັ້ນກ່ອນ,
ທະນາຍການເປັນຄົນເຂົ້າເມືອງ, ຫລື
ອົງການຄວາມຮຸນແຮງໃນຄອບຄົວຫລືການເປັນຄົນເຂົ້າເມືອງ.

ຖ້າທ່ານຄິດວ່າຄືຈະບໍ່ມີເງື່ອນໄຂເໝາະສົມພາຍໃຕ້ກົດໝາຍມາດຕຣາ VAWA ບໍ່ໃຫ້ໝົດຫວັງເທື່ອ.
ມັນອາດຍັງມີວິທີອື່ນທີ່ທ່ານສາມາດຂໍເອົາຖານະການເປັນຄົນເຂົ້າເມືອງ, ເຊັ່ນວ່າ ການຂໍຕໍ່ໜັງສືຜ່ານແດນໃໝ່
ທີ່ທາງສະພາສູງໄດ້ຄິດຄົ້ນຂຶ້ນເພື່ອຜູ້ປະສົບໄພອາຊະຍາກຳ. ໃຫ້ເວົ້າປຶກສາສະພາບການຂອງທ່ານກັບຜູ້ຊ່ອຍເຂົ້າເມືອງຫລືຜູ້ຊ່ອຍ
ໃນເຣື່ອງຄວາມຮຸນແຮງໃນຄອບຄົວ.

**ການລັກລອບຄົນທັງຫລາຍເຂົ້າມາ**

ການລັກລອບຄົນກໍ່ເປັນການທາລຸນຢ່າງໜຶ່ງ. ການລັກລອບຄົນຜ່ານແດນ ຖືເປັນການຄ້າທາດໃນຮູບການໃໝ່.
ເພື່ອຂ່າວຂໍ້ມູນເພີ່ມເຕີມໃນການລັກລອບຄົນຜ່ານແດນນັ້ນ:

- ຫ້ອງການສະຫະປະຊາຊາດເຣື່ອງຢາເສບຕິດແລະອາຊະຍາກຳ
  (United Nations Office on Drugs and Crime)
- ຫ້ອງການຣັດຂອງສະຫະຣັດ
  (US State Department)